sv 818

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 029 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 04.02.2009

# ດຳລັດ
# ຈັດຕັ້ງປະຕິບັດກົດໝາຍ
# ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004.
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ສະບັບ ເລກທີ 644/ກປທ, ລົງວັນທີ 5 ເມສາ 2007.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ວາງອອກເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍນາຍທະຫານກອງ

ທັບປະຊາຊົນລາວກ່ຽວກັບການປະຕິບັດຫຼັກການ, ມາດຕະຖານ, ເງື່ອນໄຂການສັບຊ້ອນໜ້າທີ່, ປະດັບຊັ້ນ, ເລື່ອນຊັ້ນ, ເລື່ອນທຽບຊັ້ນ, ຍົກຂັ້ນເງິນເດືອນ ແລະ ການປະຕິບັດນະໂຍບາຍຕໍ່ ນາຍທະຫານໃຫ້ຖືກຕ້ອງຕາມເປົ້າໝາຍ ແລະເປັນເອກະພາບໃນຂອບເຂດທົ່ວກອງທັບ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

ຄຳສັບຕ່າງ ໆ ທີ່ບັນຍັດໄວ້ໃນກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ມີຄວາມໝາຍດັ່ງນີ້:

- **ປະດັບຊັ້ນ ແລະ ປະດັບທຽບຊັ້ນ** ໝາຍເຖິງການຕົກລົງ ມອບຊັ້ນໃຫ້ນາຍທະຫານໃນຄັ້ງທຳອິດ ຊຶ່ງຜ່ານມາ ຜູ້ກ່ຽວບໍ່ທັນໄດ້ຊັ້ນນາຍທະຫານ.
- **ເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ** ໝາຍເຖິງການຕົກລົງເລື່ອນຊັ້ນໃຫ້ສູງກວ່າຊັ້ນເກົ່າຊຶ່ງຜ່ານ ມາຜູ້ກ່ຽວມີຊັ້ນນາຍທະຫານແລ້ວ.
- **ການຍົກຂັ້ນເງິນເດືອນ** ໝາຍເຖິງການຕົກລົງໃຫ້ຜູ້ກ່ຽວໄດ້ຮັບເງິນເດືອນສູງກວ່າຂັ້ນເກົ່າໜຶ່ງຂັ້ນ, ຜູ້ກ່ຽວມີສິດຕິດຊັ້ນຕາມຊັ້ນເກົ່າບໍ່ມີສິດຕິດຊັ້ນຕາມການຍົກຂັ້ນເງິນເດືອນ.

**ມາດຕາ 3. ການປະດັບຊັ້ນ, ເລື່ອນຊັ້ນ ແລະ ປະດັບທຽບຊັ້ນ, ເລື່ອນທຽບຊັ້ນ**

ການປະດັບຊັ້ນ, ເລື່ອນຊັ້ນ ແລະ ປະດັບທຽບຊັ້ນ, ເລື່ອນທຽບຊັ້ນແມ່ນປະຕິບັດດັ່ງນີ້:

1. ການປະດັບຊັ້ນ ແລະເລື່ອນຊັ້ນ ແມ່ນປະດັບ ແລະ ເລື່ອນໃຫ້ນາຍທະຫານຜູ້ທີ່ເຮັດໜ້າທີ່ ນຳພາ, ບັນຊາຕົວຈິງ ແລະ ຜູ້ຮຽນຈົບຈາກໂຮງຮຽນນາຍທະຫານທັງພາຍໃນ ແລະ ຕ່າງປະເທດ ຕາມທີ່ໄດ້ກຳນົດໃນມາດຕາ 15 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ.

2. ການປະດັບທຽບຊັ້ນ ແລະ ເລື່ອນທຽບຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍ ວ່າດ້ວຍ ນາຍທະຫານກອງ ທັບປະຊາຊົນລາວ ແມ່ນປະດັບ ແລະ ເລື່ອນໃຫ້ນາຍ ທະຫານວິຊາສະເພາະເຕັກນິກ ຕ່າງໆ ຜູ້ທີ່ບໍ່ໄດ້ເຮັດໜ້າທີ່ນຳພາ, ບັນຊາ ແລະ ບໍ່ໄດ້ຮຽນຜ່ານໂຮງ ຮຽນນາຍທະຫານ, ການເລື່ອນ ທຽບຊັ້ນ ແມ່ນເລື່ອນທຽບແຕ່ຊັ້ນຮ້ອຍຕີເຖິງທຽບຊັ້ນ ພັນເອກ, ບໍ່ໄດ້ເລື່ອນທຽບຊັ້ນນາຍພົນ.

3. ການປະດັບທຽບຊັ້ນໃຫ້ພະນັກງານທີ່ມາຈາກຝ່າຍພົນລະເຮືອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂໍ້ 4 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວແມ່ນໃຫ້ປະຕິບັດດັ່ງນີ້:

- ຈົບຊັ້ນກາງ, ເປັນລັດຖະກອນ 9 ປີ ລົງລຸ່ມ ແມ່ນປະດັບທຽບຊັ້ນຮ້ອຍຕີ, ເປັນລັດຖະກອນ10 ປີ ຂຶ້ນໄປແມ່ນປະດັບທຽບຊັ້ນຮ້ອຍໂທ.

- ຈົບຊັ້ນສູງ ແລະ ປະລິນຍາຕີ, ເປັນລັດຖະກອນ 9 ປີ ລົງລຸ່ມ ແມ່ນປະດັບທຽບຊັ້ນຮ້ອຍໂທເປັນລັດຖະກອນ 10 ປີ ຂຶ້ນໄປ ແມ່ນປະດັບທຽບຊັ້ນຮ້ອຍເອກ.

- ຈົບປະລິນຍາໂທ, ເປັນລັດຖະກອນ 9 ປີ ລົງລຸ່ມ ແມ່ນປະດັບທຽບຊັ້ນຮ້ອຍເອກ, ເປັນລັດຖະກອນ 10 ປີ ຂຶ້ນໄປແມ່ນປະດັບທຽບຊັ້ນພັນຕີ.

- ຈົບຊັ້ນປະລິນຍາເອກຂຶ້ນໄປ, ເປັນລັດຖະກອນ 9 ປີ ລົງລຸ່ມ ແມ່ນປະດັບທຽບຊັ້ນພັນຕີ, ເປັນລັດຖະກອນ 10 ປີ ຂຶ້ນໄປແມ່ນປະດັບທຽບຊັ້ນພັນໂທ.

4. ເປົ້າຫມາຍຜູ້ທີ່ຈະໄດ້ປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ ແລະ ເລື່ອນທຽບຊັ້ນ ລະອຽດແມ່ນໃຫ້ກະຊວງປ້ອງກັນປະເທດເປັນຜູ້ກຳນົດລະບຽບການ.

## ຫມວດທີ II
## ການບັນຊາ ແລະ ການກໍ່ສ້າງນາຍທະຫານ

### ມາດຕາ 4. ການບັນຊາຂອງນາຍທະຫານແຕ່ລະຊັ້ນ

ການບັນຊາຂອງນາຍທະຫານແຕ່ລະຊັ້ນ ນອກຈາກມີມາດຕະຖານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງ ກົດຫມາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວແລ້ວຍັງຕ້ອງມີມາດຕະຖານຕື່ມ ດັ່ງນີ້:

1. ນາຍທະຫານຈະເຮັດຫນ້າທີ່ນຳພາ, ບັນຊາຊັ້ນກອງຮ້ອຍ ແລະ ທຽບເທົ່າຕ້ອງໄດ້ຜ່ານການນຳພາ, ການບັນຊາຊັ້ນໝູ່ ຫຼືຊັ້ນຫມວດ ແລະ ທຽບເທົ່າ.

2. ນາຍທະຫານຈະເຮັດຫນ້າທີ່ນຳພາ, ບັນຊາຊັ້ນກອງພັນນ້ອຍ ແລະ ທຽບເທົ່າຕ້ອງໄດ້ຜ່ານການນຳພາ, ການບັນຊາຊັ້ນຫມວດ ຫຼືຊັ້ນກອງຮ້ອຍ ແລະ ທຽບເທົ່າ.

3. ນາຍທະຫານຈະເຮັດຫນ້າທີ່ນຳພາ, ການບັນຊາຊັ້ນກອງພັນໃຫຍ່ ແລະ ທຽບເທົ່າຕ້ອງໄດ້ຜ່ານການນຳພາ, ການບັນຊາຊັ້ນກອງຮ້ອຍຫຼືກອງພັນນ້ອຍ ແລະ ທຽບເທົ່າ.

4. ນາຍທະຫານຈະເຮັດຫນ້າທີ່ນຳພາ, ບັນຊາຊັ້ນກອງພົນ ແລະທຽບເທົ່າຕ້ອງໄດ້ຜ່ານການນຳພາ, ການບັນຊາຊັ້ນກອງພັນໃຫຍ່ ແລະ ທຽບເທົ່າ.

### ມາດຕາ 5. ພັນທະຂອງອົງການຈັດຕັ້ງພັກ-ລັດ ຂັ້ນຕ່າງໆໃນການກໍ່ສ້າງນາຍທະຫານກອງທັບປະຊາຊົນລາວ.

ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງຂັ້ນຕ່າງໆ ໂດຍສະເພາະ ແມ່ນຄະນະຈັດຕັ້ງສູນກາງພັກ, ຄະນະຈັດຕັ້ງຂອງບັນດາກະຊວງ, ແຂວງ, ກະຊວງສຶກສາທິການ, ພະແນກສຶກສາແຂວງ, ບັນດາສະຖາບັນໂຮງຮຽນຂັ້ນຕ່າງ ໆ ມີພັນ

ທະໃນການກໍ່ສ້າງນາຍທະຫານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ດັ່ງນີ້:

1. ອຳນວຍຄວາມສະດວກ, ສ້າງເງື່ອນໄຂ, ໃຫ້ທຶນແກ່ກອງທັບໄດ້ສົ່ງນາຍ ແລະພົນທະຫານ ເຂົ້າຄົ້ນຄ້ວາຮ່ຳຮຽນ, ກໍ່ສ້າງ, ບຳລຸງຝຶກອົບຮົມຢູ່ສະຖາບັນ, ໂຮງຮຽນຕ່າງ ໆ ທັງພາຍໃນ ແລະ ຕ່າງປະເທດ.

2. ບັນດາສະຖາບັນ, ໂຮງຮຽນວິຊາຊີບ, ໂຮງຮຽນສາມັນຕ່າງ ໆ ຊ່ວຍສ້າງໃຫ້ນາຍທະຫານ ມີລະດັບທາງດ້ານການສຶກສາສາມັນ, ວິຊາຊີບ, ວິຊາສະເພາະເຕັກນິກ, ຄວາມຮູ້ທັງດ້ານທິດສະດີ. ສາມາດນຳພາ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຕົນຮັບຜິດຊອບຢ່າງມີປະສິດທິຜົນສູງ.

3. ປະກອບສ່ວນໃຫ້ຄຳຄຶດຄຳເຫັນ, ຕຳນິຕິຊົມ, ສຶກສາອົບຮົມ ຊ່ວຍເຫຼືອໃຫ້ນາຍທະຫານເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດ, ມີທັດສະນະຫຼັກໝັ້ນຊົນຊັ້ນ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີ ຊື່ສັດບໍລິສຸດຕໍ່ພັກ-ລັດ, ຕໍ່ປະຊາຊົນບັນດາເຜົ່າ, ເຮັດສຳເລັດໜ້າທີ່ພັດທະນາ ແລະ ປົກປັກຮັກສາປະເທດຊາດໄວ້ໄດ້ຢ່າງໝັ້ນຄົງ.

## ໝວດທີ III
## ການປະຕິບັດນະໂຍບາຍຕໍ່ນາຍທະຫານ

**ມາດຕາ 6. ການເລື່ອນຊັ້ນ, ເລື່ອນທຽບຊັ້ນ ແລະ ແຕ່ງຕັ້ງມອບໝາຍໜ້າທີ່ຕຳແໜ່ງ ໃຫ້ນາຍທະຫານ ຜູ້ທີ່ບໍ່ໄດ້ຕາມມາດຕະຖານ**

1. ນາຍທະຫານຜູ້ທີ່ເປັນທະຫານກ່ອນເດືອນ 1 ປີ 1975 ຊຶ່ງລະດັບຄວາມຮູ້ ແລະອາຍຸກະສຽນ ບໍ່ໄດ້ຕາມມາດຕະຖານທີ່ໄດ້ກຳນົດໃນມາດຕາ 10 ແລະ 14 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແມ່ນຄົ້ນຄ້ວາພິຈາລະນາກ່ຽວກັບໜ້າທີ່ຕຳແໜ່ງດ້ວຍການໃຫ້ດຳລົງຕຳແໜ່ງເກົ່າ ຫລືຍົກຍ້າຍໄປດຳລົງຕຳແໜ່ງໃໝ່ທີ່ເໝາະສົມ, ສ່ວນຊັ້ນແມ່ນຄົ້ນຄ້ວາພິຈາລະນາເລື່ອນຂຶ້ນໄດ້ຕາມກຳນົດເວລາຂອງແຕ່ລະຊັ້ນ, ແຕ່ຕ້ອງໃຫ້ເໝາະສົມກັບຕຳແໜ່ງຕາມທີ່ໄດ້ກຳນົດໃນມາດຕາ 20 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ.

2. ນາຍທະຫານທີ່ເຮັດວຽກ 5 ປີ ຂຶ້ນໄປຢ່າງຕໍ່ເນື່ອງ ຢູ່ເຂດຫຍຸ້ງຍາກ ທຸລະກັນດານ ຊຶ່ງລະດັບຄວາມຮູ້ ແລະອາຍຸກະສຽນບໍ່ໄດ້ຕາມມາດຕະຖານທີ່ໄດ້ກຳນົດໃນມາດຕາ 10 ແລະ 14 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແມ່ນໃຫ້ຄົ້ນຄ້ວາພິຈາລະນາເລື່ອນຊັ້ນຂຶ້ນໄດ້ ຕາມກຳນົດເວລາຂອງແຕ່ລະຊັ້ນຕາມຄວາມສາມາດ ແລະຜົນງານຕົວຈິງ.

**ມາດຕາ 7. ການຍົກຂັ້ນເງິນເດືອນໃຫ້ນາຍທະຫານປະຈຳການ**

ການຍົກຂັ້ນເງິນເດືອນໃຫ້ນາຍທະຫານປະຈຳການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ວັກ 5 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແມ່ນໃຫ້ປະຕິບັດດັ່ງນີ້:

1. ກຳນົດເວລາຄົ້ນຄ້ວາພິຈາລະນາເລື່ອນຊັ້ນໄດ້ແກ່ຍາວໄປອີກໜຶ່ງຮອບ ແຕ່ບໍ່ສາມາດເລື່ອນຊັ້ນໄດ້.

2. ບໍ່ມີເງື່ອນໄຂໄປຍົກລະດັບໃຫ້ສູງຂຶ້ນເພື່ອຮັບຕຳແໜ່ງໃໝ່ສູງກວ່າເກົ່າ.

3. ການຍົກຂັ້ນເງິນເດືອນ ແມ່ນຍົກໄດ້ແຕ່ລັ້ງດຽວຕາມລຳດັບຂັ້ນເທົ່ານັ້ນ ແລະບໍ່ໄດ້ຍົກຂ້າມຂັ້ນ.

4. ການຍົກຂັ້ນເງິນເດືອນ ແມ່ນຍົກໃຫ້ນາຍທະຫານແຕ່ຊັ້ນຮ້ອຍຕີ ແລະທຽບຮ້ອຍຕີເຖິງຊັ້ນພັນເອກ ແລະທຽບຊັ້ນພັນເອກ, ສ່ວນຊັ້ນນາຍພົນບໍ່ໄດ້ຍົກຂັ້ນເງິນເດືອນອີກ.

**ມາດຕາ 8. ການຍົກຂັ້ນເງິນເດືອນໃຫ້ນາຍທະຫານເວລາຮັບເບັຍບຳນານ**

ນາຍທະຫານທີ່ຮັບເບັ້ຍບຳນານຈະໄດ້ຍົກເງິນຂັ້ນເດືອນຂຶ້ນຕື່ມໜຶ່ງຂັ້ນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂໍ້ 7 ຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວດ້ວຍເງື່ອນໄຂ ດັ່ງນີ້:

1. ນາຍທະຫານປະຈຳການ ທີ່ໄດ້ຍົກຂັ້ນເງິນເດືອນແລ້ວ, ເມື່ອໄດ້ຮັບເບັ້ຍບຳນານຈະໄດ້ຍົກຂັ້ນເງິນເດືອນຂຶ້ນຕື່ມໜຶ່ງຂັ້ນ.

2. ນາຍທະຫານແຕ່ຊັ້ນຮ້ອຍຕີ ແລະທຽບເທົ່າຊັ້ນຮ້ອຍຕີ ຮອດຊັ້ນພັນເອກ ແລະທຽບຊັ້ນພັນເອກ, ສ່ວນຊັ້ນນາຍພົນຈະບໍ່ໄດ້ຍົກຂັ້ນເງິນເດືອນອີກ.

3. ນາຍທະຫານທີ່ບໍ່ຖືກສານຕັດອິດສະລະພາບ ແລະບໍ່ຖືກປະຕິບັດວິໄນທາງບໍລິຫານ.

4. ນາຍທະຫານທີ່ຮັບເບັ້ຍບຳນານກ່ອນລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ ສະບັບເລກທີ 69/ສປປ ລາວ ລົງວັນທີ 15 ພະຈິກປີ 2004 ວ່າດ້ວຍການປະກາດໃຊ້ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວສະບັບເລກທີ 07/ສພຊ. ລົງວັນທີ 22 ຕຸລາ 2004 ແມ່ນມອບໃຫ້ກະຊວງແຮງງານສະຫວັດດີການສັງຄົມເປັນຜູ້ພິຈາລະນາ ແລະຕົກລົງຍົກຂັ້ນເງິນເດືອນບຳນານຂຶ້ນຕື່ມຕາມຄວາມເໝາະສົມ.

5. ການຄິດໄລ່ຍົກຂັ້ນເງິນເດືອນ ແມ່ນໃຫ້ນັບແຕ່ເດືອນທີ່ມີຂໍ້ຕົກລົງໃຫ້ອອກພັກຜ່ອນຮັບເບັ້ຍບຳນານຢ່າງເປັນທາງການເປັນຕົ້ນໄປ, ສ່ວນເງິນນະໂຍບາຍ15% ຈ່າຍເທື່ອທຳອິດນັ້ນ ແມ່ນໃຫ້ຄິດໄລ່ຕາມຊັ້ນເກົ່າ ແລະເງິນເດືອນ ເກົ່າໃນເວລາທີ່ຜູ້ກ່ຽວຍັງປະຈຳການຢູ່.

**ມາດຕາ 9. ການຕົກລົງຍົກຂັ້ນເງິນເດືອນ, ປະກາດຕຳແໜ່ງ ແລະປະກາດຊັ້ນນາຍທະຫານ**

**1. ການຕົກລົງຍົກຂັ້ນເງິນເດືອນ**

- ນາຍົກລັດຖະມົນຕີແຫ່ງ ສປປ ລາວ ເປັນຜູ້ຕົກລົງຍົກຂັ້ນເງິນເດືອນຊັ້ນພັນເອກ ແລະ ທຽບຊັ້ນ ພັນເອກ ຂຶ້ນກິນເງິນຊັ້ນພົນຈັດຕະວາ.
- ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງຍົກຂັ້ນເງິນເດືອນຊັ້ນພັນຕີ, ພັນໂທ, ພັນເອກ ແລະ ທຽບຊັ້ນພັນຕີ, ພັນໂທ, ພັນເອກ.
- ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ຕົກລົງຍົກຂັ້ນເງິນເດືອນຊັ້ນຮ້ອຍໂທ, ຮ້ອຍເອກ ແລະທຽບຮ້ອຍໂທ, ຮ້ອຍເອກ.
- ການຍົກຂັ້ນເງິນເດືອນໃນເວລາອອກຮັບເບັ້ຍບຳນານຈະບໍ່ຂຶ້ນກັບກຳນົດເວລາຂອງການເລື່ອນຊັ້ນ.

**2. ການປະກາດຕຳແໜ່ງ ແລະ ຊັ້ນນາຍທະຫານ**

- ນາຍົກລັດຖະມົນຕີແຫ່ງ ສປປ ລາວເປັນຜູ້ປະກາດຕຳແໜ່ງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ, ປະກາດຊັ້ນພົນໂທ ແລະ ພົນເອກ ຕາມລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ.
- ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນຜູ້ປະກາດຕຳແໜ່ງລັດຖະມົນຕີຊ່ວຍວ່າການ, ຫົວໜ້າກົມໃຫຍ່, ຮອງຫົວໜ້າກົມໃຫຍ່, ຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າອຳນວຍການວິທະຍາຄານປ້ອງກັນຊາດໄກສອນພົມວິຫານ. ປະກາດຊັ້ນພັນເອກຕາມດຳລັດຂອງນາຍົກລັດຖະມົນຕີ ແລະປະກາດຊັ້ນພົນຈັດຕະວາ ແລະພົນຕີ ຕາມລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ.
- ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ປະກາດຕຳແໜ່ງຫົວໜ້າ ແລະຮອງຫົວໜ້າກົມ, ຮອງຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າ ແລະ ຮອງກອງພົນ, ຫົວໜ້າ ແລະຮອງກອງບັນຊາການທະຫານ ແຂວງ, ຫົວໜ້າ ແລະ ຮອງກອງພົນໃຫຍ່ເອກະລາດ, ຮອງອຳນວຍການວິທະຍາຄານ ປ້ອງ ກັນຊາດໄກສອນ ພົມວິຫານ, ຫົວໜ້າ ແລະຮອງອຳນວຍການບັນດາວິທະຍາຄານ ,ໂຮງຮຽນ, ໂຮງໝໍ ແລະ ຫົວໜ່ວຍທຽບເທົ່າ ແລະ ປະກາດຊັ້ນພັນໂທ.
- ນອກຈາກບັນດາຕຳແໜ່ງທີ່ກ່າວມາຂ້າງເທິງນີ້ ແລະ ຊັ້ນ ພັນຕີ ລົງລຸ່ມແມ່ນມອບໃຫ້ບັນດາກົມໃຫຍ່, ຫ້ອງວ່າການກະຊວງ, ບັນດາວິທະຍາຄານ, ອົງການ, ກົມກອງຊັ້ນຕ່າງ ໆ ເປັນຜູ້ປະກາດຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ ຫລືຂອງກົມໃຫຍ່ການເມືອງກອງທັບ.

**ມາດຕາ 10. ຂັ້ນຕອນ ແລະການກະກຽມຮັບເບ້ຍບໍານານ**

ເມື່ອອາຍຸກະສຽນ ແລະອາຍຸການຄົບເງື່ອນໄຂຮັບເບ້ຍບໍານານຕ້ອງຕື່ນຕົວຂຽນຄໍາຮ້ອງດ້ວຍຕົນເອງ ຫລືການຈັດຕັ້ງກ່ຽວຂ້ອງລຸ່ມສຸດຂອງຕົນເອງ ເພື່ອກຽມຮັບເບ້ຍບໍານານ, ເມື່ອການຈັດຕັ້ງລຸ່ມສຸດ ແລ້ວໃຫ້ປະກອບ ເອກະສານຄົບຊຸດຂອງຕົນເອງ ສົ່ງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຕາມລະບຽບຫຼັກການ, ຕໍ່ຜູ້ທີ່ການຈັດຕັ້ງລຸ່ມສຸດໃຫ້ກຽມຮັບເບ້ຍບໍານານໄລຍະກະກຽມ ແມ່ນ 6 ເດືອນ, ເມື່ອຮອດກໍານົດທາງການຈັດຕັ້ງຈະອອກຂໍ້ຕົກລົງຮັບເບ້ຍບໍານານເປັນທາງການແລ້ວສົ່ງໃຫ້ຜູ້ກ່ຽວ ແລະການຈັດຕັ້ງທີ່ກ່ຽວຂ້ອງ.

ນາຍທະຫານຜູ້ເຮັດວຽກກັບທາດເບື່ອ ຫຼືຢູ່ເຂດທຸລະກັນດານ 15 ປີ ຢ່າງຕໍ່ເນື່ອງ ນັບທັງເພດຍິງ ແລະເພດຊາຍ, ອາຍຸການປະຕິວັດບໍ່ຫຼຸດ 20 ປີ, ອາຍຸກະສຽນບໍ່ຈໍາກັດ ມີສິດຮັບເບ້ຍບໍານານໄດ້.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 11. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງແຮງງານສະຫວັດດີການສັງຄົມ, ກະຊວງການເງິນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນພ້ອມກັນຈັດຕັ້ງປະຕິບັດດໍາລັດສະບັບນີ້ໃຫ້ຖືກຕ້ອງ ແລະເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

**ບົວສອນ ບຸບຜາວັນ**